ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 33 15 --- /ຜ-ຟຝລ

ນະຄອນຫຼວງວຽງຈັນ, ວັນທີ 20 OCT 2023

## ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຝລ), ຂໍເຊີນບັນດາບໍລິສັດປະກັນໄພ ທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບ ການບໍລິການປະກັນໄພ 06 ເຂື່ອນ (ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລິກ, ເຂື່ອນໄຟຟ້ານ້ຳຊອງ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2) ຂອງ ຜ-ຟຝລ ສົກປີ 2024-2025.

ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຝລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຝລ, ສະບັບປັບປຸງ ປີ 2022 ລົງວັນທີ 30/12/2022.

ບໍລິສັດປະກັນໄພ ທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນ ໄດ້ທີ່ ສຳນັກງານໃຫຍ່ ຜ-ຟຝລ, ຝ່າຍບໍລິຫານງານສະໜັບສະໜູນອົງກອນ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 24 OCT 2023 ຈົນເຖິງວັນທີ 24 NOV 2023, ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສຳນັກງານຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

ບໍລິສັດປະກັນໄພ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຝລ, ເລີ່ມແຕ່ວັນທີ 24 OCT 2023 ເຖິງວັນທີ 24 NOV 2023, ໃນລາຄາ 250.000 (ສອງແສນຫ້າສິບພັນ) ກີບ/ຊຸດ, ວິທີການຊຳລະຕ້ອງເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຝລ ຈະບໍ່ມີການສົ່ງຄືນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຝລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ, ວັນທີ 12 JAN 2024. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດ, ຜ-ຟຝລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 12 JAN 2024, ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຜ-ຟຝລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ວົງສະກຸນ ຍົ່ງຍົງ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la